## ມິຊຊາສົມໂພດພຣະກຣິສໂຕປະຈັກ
## ວັນທີ 8 ມັງກອນ 2023



**ພຣະວໍລະສານໂດຍນັກບຸນມັດເທວ 2, 1-12**

ເມື່ອພຣະເຢຊູເຈົ້າຊົງບັງເກີດຢູ່ເມືອງເບັດເລແຮມແຂວງຢູດາໃນສະໄໝພະຍາເຮຣັອດເປັນກະສັດນັ້ນ ມີພວກບັນດິດຈາກທິດຕາເວັນອອກມາກຸງເຢລູຊາແລມຖາມວ່າ: ກະສັດຂອງພວກຢູເດວທາກໍາເກີດມານັ້ນຢູ່ໃສ? ພວກເຮົາໄດ້ແນມເຫັນດາວຂອງພຣະອົງທາງທິດຕາເວັນອອກ ແລະໄດ້ມານໍາມັດສະການພຣະອົງ. ພະຍາເຮຣັອດຊາບຂ່າວນີ້ກໍຕົກໃຈຢ້ານ ແລະໝົດເມືອງເຢລູຊາແລມກໍວຸ້ນວາຍໄປຕາມດ້ວຍ. ເຮຣັອດຈຶ່ງມີຄໍາສັ່ງໃຫ້ປະຊຸມພວກເຈົ້າຄະນະສົງແລະພວກນັດປາດພຣະຄໍາພີແລ້ວສອບຖາມວ່າ: ພຣະກຣິສໂຕເຈົ້າຈະຕ້ອງບັງເກີດຢູ່ບ່ອນໃດແທ້? ພວກນັ້ນກໍຕອບວ່າ: ຈະບັງເກີດຢູ່ເບັດເລແຮມ ແຂວງຢູດາ ຕາມປະພາສົກໄດ້ກ່າວໄວ້ວ່າ: ເບັດເລແຮມ ດິນແດນແຫ່ງຢູດາເອີຍ! ເຈົ້າຈະບໍ່ນ້ອຍໜ້າແກ່ຫົວເມືອງອື່ນໆແຫ່ງຢູດາດອກ. ຍ້ອນວ່າຜູ້ນໍາອິສຣາແອນລາດສະດອນຂອງເຮົາຈະອອກມາຈາກເຈົ້າ. ພະຍາເຮຣົດຈຶ່ງຮຽກພວກບັນດິດເຂົ້າມາເຝົ້າຢ່າງລັບໆ ແລ້ວສືບຖາມຢ່າງຖີ່ຖ້ວນເຖິງວັນເວລາທີ່ດາວດວງນັ້ນໄດ້ປາກົດອອກມາ. ແລ້ວກໍສົ່ງພວກບັນດິດໄປເບັດເລແຮມພ້ອມທັງສັ່ງວ່າ: ພວກທ່ານຈົ່ງໄປສືບຖາມເລື່ອງພຣະກຸມານໃຫ້ແຈ່ມແຈ້ງ, ແລະເມື່ອພົບເຫັນແລ້ວໃຫ້ພວກທ່ານຫລົບມາບອກຂ້າພະເຈົ້າ ເພື່ອຂ້າພະເຈົ້າຈະໄດ້ໄປນໍາມັດສະການດ້ວຍ.

ເມື່ອຮັບບັນຊາແລ້ວ ພວກບັນດິດກໍອອກເດີນທາງ. ດາວທີ່ເຄີຍເຫັນຢູ່ທິດຕາເວັນອອກນັ້ນ ກໍປາກົດອອກມານໍາທາງໃຫ້ອີກແລະໄດ້ໄປຢຸດຢູ່ບ່ອນພຣະກຸມານປະທັບຢູ່. ພວກບັນດິດເຫັນດາວ ກໍພາກັນຊື່ນຊົມຍິນດີເປັນຢ່າງຍິ່ງ. ເມື່ອເຂົ້າໃນເຮືອນ, ພວກເພິ່ນກໍພົບເຫັນພຣະກຸມານແລະພຣະມານດາມາຣີອາ ແລ້ວກໍພາກັນຂາບລົງນົບໄຫວ້ພຣະກຸມານ. ຕໍ່ໄປ, ໄດ້ໄຂຫີບນໍາເອົາເຄື່ອງບັນນາການມີທອງຄໍາ, ກໍາຍານ ແລະເຄື່ອງຫອມຂຶ້ນຖະຫວາຍພຣະອົງ.

ພວກບັນດິດໄດ້ຮັບຊາບທາງຄວາມຝັນວ່າ ບໍ່ໃຫ້ຫລົບຄືນໄປຫາພະຍາເຮຣັອດ ຈຶ່ງໄດ້ພາກັນຫລົບເມືອປະເທດຂອງຕົນໂດຍທາງອື່ນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ພວກເຮົາຫາກໍ່ສະຫລອງບຸນໂນແອນ, ບຸນພຣະບຸດພຣະເຈົ້າບັງເກີດເພື່ອຢູ່ນຳມະນຸດ ແລະໄຂສຳແດງໃຫ້ມະນຸດຮູ້ເຖິງຄວາມຮັກຂອງພຣະບິດາທີ່ມີຕໍ່ພວກເຂົາ.

ຈາກນັ້ນ, ພວກເຮົາກໍ່ສະຫລອງວັນຂຶ້ນປີໃໝ່ສາກົນແລະກໍ່ເປັນວັນສົມໂພດພຣະນາງມາຣີອາມານດາພຣະເຈົ້າ. ຍ້ອນພຣະນາງໄດ້ໃຫ້ກຳເນີດພຣະບຸດພຣະເຈົ້າຊຶ່ງພວກເຮົາຮຽກວ່າ: "ເຢຊູ" ອັນມີຄວາມໝາຍພຣະຜູ້ກູ້ໄຖ່.

ແລະວັນນີ້ພວກເຮົາກໍ່ພ້ອມກັບພຣະກຣິສຕະຈັກສົມໂພດພຣະກຣິສໂຕປະຈັກ ຫລືຮຽກອີກຊື່ໜຶ່ງວ່າບຸນ Epiphanie. ຄຳວ່າ Epiphanie ມີຮາກສັບມາຈາກພາສາກຣີກອັນມີຄວາມໝາຍ: ແສງສະວ່າງມາຈາກເບື້ອງບົນຊຶ່ງເປັນທີ່ມາຂອງຄຳວ່າ: ການສຳແດງຕົວຂອງພຣະເຈົ້າ. ດ້ວຍເຫດນີ້ໃນບົດອ່ານຂອງມິຊຊາວັນສົມໂພດນີ້ພວກເຮົາຈະໄດ້ຍິນຄຳວ່າ: ແສງສະວ່າງ, ດວງດາວແລະການເຜີຍສຳແດງຂອງພຣະເຈົ້າໃຫ້ພວກບັນດິດຫລືພະຍາສາມອົງທີ່ມາຈາກທິດຕາເວັນອອກ.

ໃນບົດອ່ານທີໜຶ່ງ, ປະພາສົກອີຊາຢາໄດ້ກ່າວກັບປະຊາກອນອິສຣາແອນທີ່ກັບຈາກເນລະເທດຢູ່ບາບີລອນ. ພວກເຂົາໄດ້ກັບສູ່ບ້ານເກີດເມືອງນອນ, ພວກເຂົາມີສິດທີ່ຈະນົບໄຫວ້ບູຊາພຣະເຈົ້າແລະສ້າງພຣະວິຫານຄືນໃໝ່ຢູ່ນະຄອນເຢລູຊາແລມ. ແຕ່ການທີ່ຈະພື້ນຟູຊີວິດການເປັນຢູ່ແລະພຣະວິຫານນັ້ນບໍ່ແມ່ນເລື່ອງງ່າຍແລະຫລາຍຄົນກໍ່ຂາດກຳລັງໃຈ. ດ້ວຍເຫດນີ້ປະພາສົກອີຊາຢາຈຶ່ງປຸກລຸກແລະໃຫ້ຄວາມຫວັງພວກເຂົາໂດຍກ່າວວ່າ: "ເຢລູຊາແລມເອີຍຈົ່ງລຸກຂຶ້ນສ່ອງແສງເຖີດ. ດ້ວຍວ່າຄວາມສະວ່າງຂອງພຣະເຈົ້າມາເຖິງພວກເຈົ້າແລ້ວ". ຄວາມສະວ່າງນີ້ແມ່ນການປະຈັກຢູ່ຂອງພຣະເຈົ້າຢູ່ຄຽງຂ້າງພວກເຂົາ. ຄວາມສະວ່າງນີ້ຈະໃຫ້ພວກເຂົາມີຄວາມຫວັງທີ່ຈະສືບຕໍ່ຊີວິດເພື່ອເປັນພິຍານເຖິງພຣະອົງ.

ສ່ວນໃນພຣະວໍລະສານວັນນີ້ກໍ່ກ່າວເຖິງແສງສະວ່າງທີ່ປະຈັກມາເພື່ອນຳພວກບັນດິດອອກເດີນທາງເພື່ອຊອກຫາກະສັດຂອງຊາວຢິວທີ່ຫາກໍ່ບັງເກີດ. ກະສັດຜູ້ນີ້ບໍ່ແມ່ນຜູ້ຍິ່ງໃຫຍ່ແຕ່ແມ່ນກຸມານນ້ອຍທີ່ນອນໃນຮາງຫຍ້າ. ກະສັດຜູ້ນີ້ບໍ່ໄດ້ມີອານາຈັກໃນແຜ່ນດິນນີ້, ແຕ່ໃນສະຫວັນ. ກະສັດຜູ້ນີ້ບໍ່ໄດ້ມີຂ້າໃຊ້ບໍລິວານຢູ່ອ້ອມຂ້າງ, ແຕ່ແມ່ນຝູງສັດແລະບັນດາຜູ້ລ້ຽງແກະ. ກະສັດຜູ້ນີ້ບໍ່ໄດ້ມາເພື່ອໃຫ້ຄົນອື່ນຮັບໃຊ້, ແຕ່ເພື່ອຮັບໃຊ້ຄົນອື່ນ. ກະສັດຜູ້ນີ້ກໍ່ຄືພຣະເຢຊູເຈົ້ານັ້ນເອງ. ໃນທີ່ສຸດ, ແສງສະວ່າງກໍ່ໄດ້ນຳພວກບັນດິດມານົບໄຫວ້ບູຊາພຣະເຢຊູ ຜູ້ເປັນກະສັດຂອງພວກເຂົາ.

**ພາວະນາ**

ໂອພຣະເຈົ້າໃນວັນສົມໂພດພຣະກຣິສໂຕປະຈັກນີ້ ໂຜດໃຫ້ແສງສະວ່າງຂອງພຣະເຈົ້າປະຈັກແຈ້ງບ່ອນທີ່ຍັງມືດມົວຢູ່ໃນດວງໃຈຂອງລູກ, ເພື່ອລູກຈະໄດ້ພົບເຫັນພຣະອົງຜູ້ເປັນອົງແຫ່ງຄວາມສະວ່າງແລະຄວາມຣອດຂອງລູກດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ